# ຄະນະຜູ້ແທນຂັ້ນສູງທະນາຄານແຫ່ງ ສປປ ລາວ
# ເຄື່ອນໄຫວເຮັດວຽກຢ່າງເປັນທາງການຢູ່ຣາຊະອານາຈັກກຳປູເຈຍ



✸ ຂ່າວ-ພາບ: ຣັດສະໝີ ດວງສັດຈະ

ຄະນະຜູ້ແທນຂັ້ນສູງທະນາຄານແຫ່ງ ສປປ ລາວ ຊຶ່ງນຳໂດຍທ່ານ ສົມພາວ ໄຟສິດ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ເດີນທາງເຄື່ອນໄຫວເຮັດວຽກຢ່າງເປັນທາງການຢູ່ຣາຊະອານາຈັກກຳປູເຈຍ ຕາມຄຳເຊີນຂອງທ່ານຜູ້ວ່າການທະນາຄານແຫ່ງຊາດກຳປູເຈຍ ແລະ ໄດ້ອອກເດີນທາງໃນຕອນທ່ຽງຂອງວັນທີ 9 ທັນວາ ຜ່ານມາ.

ການເຄື່ອນໄຫວຂອງຄະນະຜູ້ແທນຂັ້ນສູງຂອງທະນາຄານແຫ່ງ ສປປ ລາວ ໃນຄັ້ງນີ້ ໄດ້ມີກຳນົດໝາຍເຂົ້າຮ່ວມກອງປະຊຸມທະວິພາຄີລະຫວ່າງທະນາຄານແຫ່ງ ສປປ ລາວ ກັບ ທະນາຄານແຫ່ງຊາດກຳປູ

ເຈຍ, ກອງປະຊຸມຍັງຈະໄດ້ມີການແລກປ່ຽນບົດຮຽນ ແລະ ພຶດຕິກຳຂອງການເຄື່ອນໄຫວຂອງທະນາຄານກາງຂອງສອງປະເທດ, ນອກນີ້ກໍຍັງຈະມີການທົບທວນຜົນການພົວພັນ-ຮ່ວມມືລະຫວ່າງທະນາຄານແຫ່ງ ສປປ ລາວ ກັບທະນາຄານແຫ່ງຊາດກຳປູເຈຍບົນພື້ນຖານການຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈທີ່ທັງສອງຝ່າຍຮ່ວມກັນລົງນາມເມື່ອທ້າຍປີ 2010 ທີ່ນະຄອນຫຼວງວຽງຈັນ ສປປ ລາວ ແລະ ໃນການພົບປະໃນເທື່ອນີ້ກໍຈະມີການລົງນາມໃນບົດບັນທຶກຄວາມເຂົ້າໃຈສະບັບໃໝ່ທີ່ເນັ້ນເຖິງກອບການພົວພັນ-ຮ່ວມມືໃນດ້ານການແລກປ່ຽນບົດຮຽນທາງດ້ານວິຊາການ, ການຮ່ວມມືໃນດ້ານຂໍ້ມູນຂ່າວສານ, ການເຄື່ອນໄຫວເຮັດວຽກ - ຍັ້ງມຢາມ ແລະ ວຽກງານສຳຄັນອື່ນໆຈຳນວນໜຶ່ງ.

ການພົວພັນ ແລະ ຮ່ວມມືລະຫວ່າງທະນາຄານກາງຂອງສອງປະເທດແມ່ນໄດ້ຖືກສ້າງຂຶ້ນໃນຕົ້ນສະຕະວັດໃໝ່ ແລະ ໄດ້ດຳເນີນໄປດ້ວຍບັນຍາກາດແຫ່ງຄວາມເຂົ້າອົກເຂົ້າໃຈ, ມີຄວາມໄວ້ເນື້ອເຊື່ອໃຈ ແລະ ກໍມີບາດກ້າວຂະຫຍາຍຕົວຍິ່ງໆຂຶ້ນບົນພື້ນຖານການພົວພັນ-ຮ່ວມມືຖານບ້ານໃກ້ເຮືອນຄຽງຕາມນະໂຍບາຍຂອງລັດຖະບານແຫ່ງ ສປປ ລາວ ແລະ ລັດຖະບານແຫ່ງຣາຊະອານາຈັກກຳປູເຈຍ ທີ່ມີຕໍ່ກັນ.